ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 638 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 01. ທັນວາ. 2021

ດຳລັດ
ວ່າດ້ວຍຊຸດເຄື່ອງນຸ່ງປະຈຳຊາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 584/ຖວທ, ລົງວັນທີ 18 ພະຈິກ 2021.

ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດອົງປະກອບ, ມາດຕະຖານ ຂອງຊຸດເຄື່ອງນຸ່ງປະຈຳຊາດ ເພື່ອໃຫ້ມີຄວາມເປັນເອກະພາບ, ຮັກສາໄດ້ລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ ແນໃສ່ອະນຸລັກ, ສືບທອດ ຮີດຄອງປະເພນີ, ເສີມຂະຫຍາຍ ແລະ ພັດທະນາ ຫົວຄິດປະດິດສ້າງຂອງປະຊາຊົນ ດ້ານສີໄມ້ລາຍມືອັນປານີດຈົບງາມທີ່ເປັນເອກະລັກອັນໂດດເດັ່ນຂອງຊາດ.

ມາດຕາ 2 ຊຸດເຄື່ອງນຸ່ງປະຈຳຊາດ

ຊຸດເຄື່ອງນຸ່ງປະຈຳຊາດ ແມ່ນ ເຄື່ອງນຸ່ງຫົ່ມ, ເຄື່ອງປະດັບເອ້ ທີ່ເປັນເອກະລັກ ແລະ ມູນເຊື້ອວັດທະນະທຳ ທີ່ນຳໃຊ້ແຕ່ງກາຍຂອງທ່ານຍິງ ແລະ ທ່ານຊາຍ ເພື່ອເຂົ້າຮ່ວມ ພິທີທາງການ, ພິທີການ ແລະ ພິທີກຳ ຕາມຄວາມເໝາະສົມ.

ມາດຕາ 3 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຢູ່ພາຍໃນ ແລະ ຕ່າງປະເທດທີ່ພົວພັນກັບຊຸດເຄື່ອງນຸ່ງປະຈຳຊາດ.

ມາດຕາ 4 ອົງປະກອບ ຊຸດເຄື່ອງນຸ່ງປະຈຳຊາດທ່ານຍິງ

ອົງປະກອບ ຊຸດເຄື່ອງນຸ່ງປະຈຳຊາດ ທ່ານຍິງ ມີ ດັ່ງນີ້:

1. ເສື້ອ;
2. ສິ້ນ;
3. ແພບ່ຽງ;
4. ເກີບ.

ມາດຕາ 5 ອົງປະກອບຊຸດເຄື່ອງນຸ່ງປະຈຳຊາດ ທ່ານຊາຍ

ອົງປະກອບ ຊຸດເຄື່ອງນຸ່ງປະຈຳຊາດ ທ່ານຊາຍ ມີ ດັ່ງນີ້:

1. ເສື້ອ;
2. ໂສ້ງ;
3. ເກີບ.

ມາດຕາ 6 ມາດຕະຖານ ຊຸດເຄື່ອງນຸ່ງປະຈຳຊາດທ່ານຍິງ

ມາດຕະຖານ ຊຸດເຄື່ອງນຸ່ງປະຈຳຊາດທ່ານຍິງ ມີ ດັ່ງນີ້:

1. ເສື້ອ:

- ແພເສື້ອ: ແພໄໝ, ແພຝ້າຍ ທີ່ເປັນຜະລິດຕະພັນຂອງລາວ;
- ສີເສື້ອ: ບໍ່ຈຳກັດສີ;
- ຄໍເສື້ອ: ຂະໜາດ ສີ່ ຫາ ເຈັດ ຊັງຕີແມັດ, ຄໍປ້າຍໃສ່ແຂບ ປ້າຍຂວາ ຫາ ຊ້າຍ, ຕໍ່າ ຫຼື ປັກແສ່ວດ້ວຍຝ້າຍ ຫຼື ໄໝ ແລະ ຕິດກະດຸມ ທີ່ມີສີກົມກືນກັບສີແພເສື້ອ ສອງ ຫາ ສາມ ເມັດ ຢູ່ປາຍແຂບເສື້ອ;
- ແຂນເສື້ອ: ແຂນຍາວຊົງກະບອກ ຍາວກາຍແຂນສອກ ເຖິງ ຂໍ້ແຂນ.

2. ສິ້ນ:

- ຜືນສິ້ນ: ມີຫົວສິ້ນ ແລະ ຕີນສິ້ນ;
- ສິ້ນຝ້າຍ ແລະ ສິ້ນໄໝ ລາຍຈົກ, ລາຍຂິດ, ລາຍຂັ້ນ ແລະ ລາຍອື່ນ ຕາມຄວາມເໝາະສົມ;
- ຕີນສິ້ນ ຂະໜາດ ສິບແປດ ຫາ ຊາວຫ້າ ຊັງຕີແມັດ ສີກົມກືນກັບຜືນ;

3. ແພບ່ຽງ: ແພບ່ຽງຕໍ່າເປັນຊຸດກົມກືນກັບຜືນສິ້ນ, ຂະໜາດລວງຍາວ ສອງຮ້ອຍຊາວ ຫາ ສອງຮ້ອຍຊາວຫ້າ ຊັງຕີແມັດ, ລວງກວ້າງ ສາມສິບຫົກ ຫາ ສີ່ສິບ ຊັງຕີແມັດ;

4. ເກີບ: ເກີບສຸບ ປິດສົ້ນ ປິດປາຍ ມີສົ້ນ, ສີດຳ, ສີນ້ຳຕານ ຫຼື ສີອື່ນ ທີ່ກົມກືນກັບເຄື່ອງນຸ່ງ.

ມາດຕາ 7 ມາດຕະຖານ ຊຸດເຄື່ອງນຸ່ງປະຈຳຊາດທ່ານຊາຍ

ມາດຕະຖານ ຊຸດເຄື່ອງນຸ່ງປະຈຳຊາດທ່ານຊາຍ ມີ ດັ່ງນີ້:

1. ເສື້ອ:
- ແພເສື້ອ: ແພໄໝ ຫຼື ແພຝ້າຍ ທີ່ເປັນຜະລິດຕະພັນຂອງລາວ;
- ສີເສື້ອ: ບໍ່ຈຳກັດສີ;
- ຄໍເສື້ອ: ຄໍຕັ້ງປິດ;
- ຖົງເສື້ອເປັນຖົງເຈາະ ຢູ່ເບື້ອງເທິງດ້ານຊ້າຍ ໜຶ່ງ ຖົງບໍ່ມີຝາປິດ, ຖົງເສື້ອລຸ່ມ ສອງ ຖົງ ມີຝາປິດ;
- ແຂນເສື້ອ: ແຂນຍາວຊົງກະບອກ ຕິດກະດຸມ ສາມ ເມັດ ຢູ່ປາຍແຂນເສື້ອ;
- ດ້ານຫຼັງເສື້ອແຈກ ສອງ ເບື້ອງ;
- ກະດຸມເສື້ອ ຫ້າ ຫາ ເຈັດ ເມັດ.

2. ໂສ້ງ:

- ແພໂສ້ງ: ແພສີດຳ, ສີມືດ ທີ່ເປັນຜະລິດຕະພັນລາວ ຫຼື ແພອື່ນ;
- ໂສ້ງ: ຂາຍາວຊົງກະບອກ.

3. ເກີບ: ເກີບສີດຳ ຫຼື ສີມືດ ແລະ ຖົງເທົ້າສີດຳ ຫຼື ສີມືດ.

ມາດຕາ 8 ຂໍ້ຫ້າມ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ແຕ່ງກາຍຊຸດເຄື່ອງນຸ່ງປະຈຳຊາດ ເຄື່ອນໄຫວ ຫຼື ກະທຳຜິດ ກົດໝາຍ ແລະ ລະບຽບການ;
2. ນຳເອົາຊຸດເຄື່ອງນຸ່ງປະຈຳຊາດ ໄປໂຄສະນາ ບິດເບືອນ, ໃສ່ຮ້າຍປ້າຍສີ, ລົບລູ່, ແຕະຕ້ອງກຽດສັກສີ ແລະ ເປັນການແບ່ງແຍກຄວາມສາມັກຄີ ພາຍໃນຊາດ;
3. ນຳເອົາຊຸດເຄື່ອງນຸ່ງປະຈຳຊາດ ໄປເປັນເຄື່ອງແບບຂອງພະນັກງານອົງການຈັດຕັ້ງຕົນ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ມາດຕາ 9 ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການຈັດຕັ້ງ ພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 10 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ

ເອກະສານຊ້ອນທ້າຍ ຮູບພາບຊຸດເຄື່ອງນຸ່ງປະຈຳຊາດ

ຕົວຢ່າງ: ຊຸດເຄື່ອງນຸ່ງປະຈຳຊາດ ທ່ານຍິງ-ທ່ານຊາຍ

ຮູບແບບເສື້ອ ທ່ານຊາຍ

ສີເສື້ອ: ບໍ່ຈຳກັດສີ

ຄໍຕັ້ງປິດ



ຖົງເສື້ອເຈາະ ເທິງ ໜຶ່ງ ຖົງບໍ່ມີ ຝາປິດ

ແຂນເສື້ອຍາວ ຊົງກະບອກ

ກະດຸມເສື້ອ ຫ້າ ຫາ ເຈັດເມັດ

ຖົງເສື້ອເຈາະ ລຸ່ມ ສອງ ຖົງມີຝາປິດ

ດ້ານຫຼັງເສື້ອແຈກ ສອງ ເບື້ອງ

ຕິດກະດຸມ ສາມ ເມັດຢູ່ປາຍແຂນ

ຮູບແບບເສື້ອ ແລະ ແພບ່ຽງ ທ່ານຍິງ

ສີເສື້ອ: ບໍ່ຈຳກັດສີ

ຄໍເສື້ອຂະໜາດ ສີ່ ຫາ ເຈັດ ຊັງຕີແມັດ
ປ້າຍແຕ່ຂວາ ຫາ ຊ້າຍ, ຕ່ຳ ຫຼື ປັກແສ່ວດ້ວຍ ຝ້າຍ ຫຼື ໄໝ

ແຂນເສື້ອຍາວຊິງກະບອກ
ຍາວກາຍແຂນສອກ ເຖິງ ຂໍ້ແຂນ

ຕິດກະດຸມສີກົມກືນກັບແພເສື້ອ ສອງ ຫາ ສາມເມັດ ຢູ່ປາຍແຂບເສື້ອ

ແພບ່ຽງ

ຂະໜາດລວງກວ້າງ ສາມສິບ ຫົກ ຫາ ສີ່ສິບ ຊັງຕີແມັດ

ຂະໜາດລວງຍາວ ສອງ ຮ້ອຍຊາວ ຫາ ສອງຮ້ອຍ ຊາວຫ້າ ຊັງຕີແມັດ

ຕົວຢ່າງ: ການບ່ຽງແພ ທ່ານຍິງ

ດ້ານໜ້າ

ວິທີການບ່ຽງແພ: ໃຫ້ເອົາແພບ່ຽງທົບເຄິ່ງແລ້ວ ພາດຂຶ້ນບ່າເບື້ອງຊ້າຍ ແລະ ເອົາເບື້ອງຫຼັງກ້ຽວຂຶ້ນກ້ອງ ແຂນເບື້ອງຂວາ ພາດເອີກຂຶ້ນໄວ້ບ່າເບື້ອງຊ້າຍ ໃຫ້ສອງສົ້ນຍ່ອນດ້ານໜ້າ, ດ້ານຫຼັງ ສະເໝີກັນແລ້ວເອົາເຂັມກັດໄວ້ ບໍ່ໃຫ້ຕົກເຮ່ຍ

ດ້ານຫຼັງ



ບັນດາຮູບພາບຕົວຢ່າງ ສິ້ນຝ້າຍ ແລະ ສິ້ນໄໝ ລາຍຈົກ, ລາຍຂິດ, ລາຍຂັ້ນ
ແລະ ລາຍອື່ນ ຕາມຄວາມເໝາະສົມ

ບັນດາຮູບພາບຕົວຢ່າງ ສິ້ນຝ້າຍ ແລະ ສິ້ນໄໝ ລາຍຈົກ, ລາຍຂິດ, ລາຍຂັ້ນ
ແລະ ລາຍອື່ນ ຕາມຄວາມເໝາະສົມ



ຕົວຢ່າງ: ສິ້ນ ຕັດສຳເລັດຮູບທ່ານຍິງ
ຫົວສິ້ນ
ຜືນສິ້ນ
ຕີນສິ້ນ ຂະໜາດສິບແປດ
ຫາ ຊາວຫ້າ ຊັງຕີແມັດ

ຕົວຢ່າງ: ໂສ້ງ ຂາຍາວຕັດສຳເລັດຮູບທ່ານຊາຍ

ຕົວຢ່າງ: ເກີບ ສີດຳ ຫຼື ສີມືດ ທ່ານຊາຍ

ຕົວຢ່າງ: ເກີບຄໍຕ່ຳ ບໍ່ສາມາດໃສ່ຄູ່ກັບຊຸດ
ເຄື່ອງນຸ່ງປະຈຳຊາດໄດ້

ຕົວຢ່າງ: ເກີບສຸບ ປິດສົ້ນ ປິດປາຍ ທ່ານຍິງ

ມີສົ້ນ ຕາມຄວາມເໝາະສົມ

ປິດສົ້ນ

ປິດປາຍ